ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 847/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 18 SEP 2013

# ຂໍ້ຕົກລົງ
## ວ່າດ້ວຍ ນະໂຍບາຍ
## ຄ່າເຊື້ອເພີງທຸງຕົ້ມ ໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມດຳລັດວ່າດ້ວຍການປະຕິບັດເງິນເດືອນ ແລະ ເງິນອຸດໜູນຕ່າງໆ ຕໍ່ພະນັກງານ-ລັດຖະກອນປີ 2013-2015 ສະບັບເລກທີ 221/ລບ ລົງວັນທີ 30 ພຶດສະພາ 2012;
- ອີງຕາມບົດບັນທຶກກອງປະຊຸມຂອງຄະນະປະຈຳພັກ-ຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ ເລກທີ 08/ຄປພ.ທຫລ ລົງວັນທີ 19/8/2013.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກ ເພື່ອກຳນົດຫຼັກການ ແລະ ລະບຽບການ ໃນການປະຕິບັດນະໂຍບາຍຄ່າເຊື້ອເພີງທຸງຕົ້ມ ໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ ໃນແຕ່ລະຕຳແໜ່ງງານ ໃຫ້ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນປັດຈຸບັນ.

**ມາດຕາ 2. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ສຳລັບພະນັກງານທະນາຄານແຫ່ງ ສປປ ລາວ ຜູ້ທີ່ມາປະຈຳການ ທີ່ເປັນພະນັກງານລົ້ມບູນ, ພະນັກງານທີ່ໄປຮຽນຢູ່ພາຍໃນປະເທດ ແລະ ພະນັກງານບຳນານເທົ່ານັ້ນ.

**ມາດຕາ 3. ນະໂຍບາຍຄ່າເຊື້ອເພີງທຸງຕົ້ມ**

ການປະຕິບັດນະໂຍບາຍ ຄ່າເຊື້ອເພີງທຸງຕົ້ມ ຕໍ່ພະນັກງານທະນາຄານແຫ່ງ ສປປ ລາວ ໃຫ້ປະຕິບັດດັ່ງນີ້:

1. ຄະນະຜູ້ວ່າການ ທຫລ, ຜູ້ຊ່ວຍຄະນະຜູ້ວ່າການ, ຄະນະພັກ ທຫລ, ຄະນະກົມ ແລະ ທຽບເທົ່າກົມ 1,000,000 ກີບ/ຄົນ/ເດືອນ;
2. ຄະນະພະແນກ ແລະ ທຽບເທົ່າພະແນກ 900,000 ກີບ/ຄົນ/ເດືອນ;
3. ລັດຖະກອນລົ້ມບູນ ແລະ ພະນັກງານບຳນານ 800,000 ກີບ/ຄົນ/ເດືອນ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110

ມາດຕາ 4. ການຈັດຕັ້ງປະຕິບັດ

ຫ້ອງການ, ກົມຈັດຕັ້ງແລະພະນັກງານ, ບັນດາກົມ ແລະ ທຽບເທົ່າ ຂອງທະນາຄານແຫ່ງ ສປປ ລາວ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

ມາດຕາ 5. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ




ດຣ. ສົມພາວ ໄຟສິດ